## ກົດໝາຍ

**ກົດໝາຍວ່າດ້ວຍການປ້ອງກັນການຫລອກລວງຄ້າຂາຍມະນຸດ ແລະ ຄວາມທາລຸນ [Trafficking and Violence Protection Act** (TVPA)] ອານຸຍາດໃຫ້ຜູ້ທີ່ລອດຊີວິດຈາກການຖືກຫລອກລວງສາມາດດລົງຊີວິດຢູ່ໃນສະຫະລັດອາເມຣິກາໄດ້ເປັນເວລາຢ່າງຕໍ່າ*ສາມປີ*, ໄດ້ລະບຸເຖິງການລົງໂທດປັບໃໝຕໍ່ຜູ້ທໍາການຫລອກລວງ ແລະ ກໍານົດລາຍການ*ບໍລິການ*ສໍາລັບຜູ້ທີ່ລອດຊີວິດຈາກການຖືກຫລອກ ລວງມີສິດໄດ້ຮັບ.

ກົດໝາຍ TVPA ກໍານົດນິຍາມປະເພດຂອງຄົນທີ່ລອດຊີວິດຈາກການຖືກຫລອກລວງທີ່ມີສິດເໝາະສົມທີ່ຈະດໍາລົງຊີວິດຢູ່ໃນສະຫະລັດອາເມຣິກາຢ່າງເຄັ່ງຄັດ. ເພື່ອຢາກໃຫ້ມີຄຸນນະສົມບັດເໝາະສົມທີ່ຈະໄດ້ຮັບວີຊາປະເພດ **T**, ຜູ້ໃຫຍ່ທີ່ ລອດຊີວິດຈາກການຖືກຫລອກລວງຈະຕ້ອງຕົກຢູ່ໃນສະ ພາບທີ່ "ຖືກຫລອກລວງປະເພດຮ້າຍແຮງ" ຊຶ່ງກ່ຽວຂ້ອງກັບ:

- ການໃຊ້ກໍາລັງບັງຄັບ, ຫລອກຕົ້ມ ຫລື ຂູ່ເຂັນ, ແລະ
- ການຕົກເປັນຂ້າທາດດ້ານເຮງງານ ຫລື ການເຮັດວຽກກ່ຽວກັບການຮ່ວມເພດຢ່າງບໍ່ໄດ້ສະມັກໃຈ.

**ຂໍ້ຍົກເວັ້ນ** ສໍາລັບຜູ້ທີ່ລອດຊີວິດຈາກການຖືກຫລອກລວງທີ່ເປັນເດັກນ້ອຍຫລືໄວໜຸ່ມ: ຜູ້ທີ່ລອດຊີວິດຈາກຖືກຫລອກລວງ ອາຍຸຕໍ່າກວ່າ 18 ປີ ມີສິດເໝາະສົມທີ່ຈະໄດ້ຮັບວີຊາປະ ເພດ **T** ຖ້າຫາກຖືກກົດດັນໃຫ້ກະທໍາສິ່ງທີ່ກ່ຽວຂ້ອງກັບເພດສໍາພັນໂດຍທີ່ບໍ່ຈໍາເປັນວ່າຜູ້ກ່ຽວຈະຖືກບັງຄັບ, ຫລອກຕົ້ມ ຫລື ຂູ່ເຂັນ ຫລືບໍ່.

ວີຊາປະເພດ **U** ມີໄວ້ສໍາລັບສໍາລັບຜູ້ທີ່ລອດຊີວິດຈາກການຖືກຫລອກລວງທີ່:

- ທົນທຸກຕໍ່ການຂົ່ມເຫັງຢ່າງໜັກໜ່ວງໂດຍເປັນຜົນເນື່ອງມາຈາກການກະທໍາທີ່ຜິດກົດໝາຍອາດຍາ, ແລະ
- ມີປະໂຫຍດ ຫລື ຂ້ອນຂ້າງມີປະໂຫຍດຕໍ່ການສືບສວນ ຫລື ດໍາເນີນຄະດີຂອງການກະທໍາຜິດກົດໝາຍອາດຍາ.

*ພີ່ນ້ອງ* ຂອງຜູ້ທີ່ລອດຊີວິດຈາກການຖືກຫລອກລວງກໍມີສິດເໝາະສົມທີ່ຈະດໍາລົງຊີວິດຢູ່ໃນສະຫະລັດອາເມຣິກາໄດ້.

ຜູ້ທີ່ລອດຊີວິດຈາກການຖືກຫລອກລວງຍັງອາດມີສິດເໝາະສົມທີ່ຈະໄດ້ຮັບ*ການບໍຣິການທາງດ້ານສຸຂພາບ ແລະ ມະນຸດສະທັມ*ເຖິງຂັ້ນເທົ່າທຽມກັບຜູ້ເປັນອົບພະຍົບ.

## AALDEF

**ສົ່ງເສີມສິດຂອງຜູ້ຍິງ ແລະຊາວໜຸ່ມທີ່ລອດຊີວິດຈາກການຖືກຫລອກລວງ:** ໂຄງການນີ້ສະໜອງຜູ້ຕາງໜ້າທາງດ້ານກົດໝາຍແກ່ຜູ້ຍິງ ແລະ ຊາວໜຸ່ມທີ່ຖືກຫລອກລວງເພື່ອຮັບປະກັນໃຫ້ເຂົາເຈົ້າໄດ້ຮັບການບໍຣິການດ້ານມະນຸດສະທັມທີ່ມີຄຸນນະພາບ.

**AALDEF:** ຖືກສ້າງຕັ້ງຂຶ້ນໃນປີ 1974, ກອງທຶນສໍາລັບການປ້ອງກັນທາງດ້ານກົດໝາຍ ແລະ ການສຶກສາແກ່ຄົນອາຊີ-ອາເມຣິກາ[Asian American Legal Defense and Education Fund (AALDEF)] ປົກປ້ອງ ແລະ ສົ່ງເສີມສິດທິດ້ານພົລເມືອງຂອງຄົນອາຊີ-ອາເມຣິກາໂດຍຜ່ານການດໍາເນີນການຟ້ອງຮ້ອງ, ການເປັນຜູ້ຕາງໜ້າ, ແລະສຶກສາອົບຮົມຊຸມຊົນໃນດ້ານສິດຂອງຜູ້ ເຂົ້າມາຢູ່ເມືອງໃໝ່, ສິດໃນການເລືອກຕັ້ງ, ຄວາມຍຸຕິທັມທາງດ້ານເສດຖະກິດ, ຄວາມຮຸນແຮງທີ່ບໍ່ເພິ່ງປາຖນາ, ແລະ ການກະທໍາອັນບໍ່ຖືກຕ້ອງຂອງຕໍາຫລວດ.

### ໂຄງການອື່ນໆທີ່ກ່ຽວຂ້ອງກັບ AALDEF

**ຄວາມສະເໝີພາບທາງດ້ານການສຶກສາ ແລະ ສິດຂອງຊາວໜຸ່ມ:** ໂຄງການນີ້ແນໃສ່ການສາມາດໄດ້ຮັບການສຶກສາທີ່ໃຊ້ສອງພາສາ, ຄວາມສາມາດເຂົ້າໃຈພາສາ, ການຕ້ານການກະ ທໍາຮຸນແຮງຕໍ່ນັກຮຽນອາຊີ ຢູ່ໃນໂຮງຮຽນຫລວງ, ການສືບປະຫວັດບຸກຄົນ ແລະ ແກ້ງອັນຕະພານຫລັງຈາກ 9-11, ການສອບເສັງຂອງໂຮງຮຽນ ແລະ ການກະທໍາທີ່ຕ້ານກັບການປະຕິບັດທີ່ບໍ່ເປັນທັມແກ່ຊົນເຜົ່າສ່ວນນ້ອຍ ແລະ ແມ່ຍິງໃນການຮັບເຂົ້າໂຮງຮຽນ.

**ຕ້ານຍັນຜົນກະທົບຈາກການປະຕິບັດນະໂຍບາຍຕໍ່ຄົນເຂົ້າເມືອງພາຍໃນທ້ອງຖິ່ນ (Local Immigration Enforcement Initiative)**:ໂຄງການນີ້ແນໃສ່ຕ້ານການປະຕິບັດກົດໝາຍວ່າດ້ວຍຄົນເຂົ້າເມືອງຂອງອົງການຣັຖບານທ້ອງຖິ່ນ ແລະ ປະຈໍາຣັຖ ແລະ ການລະເມີດຂອງຣັຖບານທ້ອງຖິ່ນ/ຣັຖຕໍ່ສິດທິຂອງ ຄົນເຂົ້າເມືອງໂດຍຜ່ານການຈັດຕັ້ງຊຸມຊົນ ແລະ ການສຶກສາອົບຮົມ, ຊັກຊວນການອອກກົດໝາຍຂອງຣັຖບານ ແລະ ການດໍາເນີນການຟ້ອງຮ້ອງ.

ຖ້າມີຄໍາຖາມທາງດ້ານກົດໝາຍ
ຕິດຕໍ່ທ່ານ **Ivy O. Suriyopas**, ສະມາຊິກ
ສະມາຄົມວ່າດ້ວຍວຽກງານຄວາມເປັນທັມທີ່ສະເໝີພາບ
(Equal Justice Works Fellow) ທີ່ **212.966.5932**
**X 235** ຫລສ isuriyopas@aaldef.org.
ຖ້າຕ້ອງການແນະນໍາຫລື ນໍາສົ່ງ, ຕິດຕໍ່ **Mabel Tso** ທີ່
**X 224** ຫລື mtso@aaldef.org.

## ການສົ່ງເສີມສິດຂອງຜູ້ຍິງ ແລະ ຊາວໜຸ່ມ ທີ່ລອດຊີວິດຈາກການ ຖືກຫລອກລວງ

*(ກອງທຶນສໍາລັບການປ້ອງກັນທາງດ້ານກົດໝາຍ ແລະ ການສຶກສາແກ່ຄົນ ອາຊີ-ອາເມຣິກາ)*
*99 HUDSON STREET, 12th FL*
*NEW YORK, NY 10013-2815*
*TEL 212.966.5932 FAX 212.966.4303*

Trafficking-Lao

## ນິຍາມການຫລອກລວງຄ້າຂາຍມະນຸດ

ການຫລອກລວງຄ້າຂາຍມະນຸດແມ່ນການຊອກຫາ, ກັກຂັງ, ຫລື ການຮັບເອົາຄົນມາໂດຍການໃຊ້ການບັງຄັບ, ຫລອກ ລວງ, ຫລື ຂົ່ມຂູ່ເພື່ອເອົາມາເປັນຂ້າທາດ, ບັງຄັບໃຫ້ເຮັດ ວຽກ, ຫລື ກົດຂີ່ ຂົ່ມເຫັງໃນການແຕ່ງງານທີ່ຖືກບັງຄັບ, ຫລື ໃນດ້ານອຸດສະຫະ ກຳການຄ້າ -ຕົວຢ່າງເຊັ່ນ: ເຮັດວຽກກະສິກຳ, ວຽກຜະຫລິດ ສິນຄ້າໃນໂຮງງານ, ການກໍ່ສ້າງ, ວຽກໃນຮ້ານອາ ຫານ, ເປັນ ຄົນໃຊ້ຢູ່ໃນເຮືອນ ຫລື ການຄ້າຂາຍທາງດ້ານປະເວນີ (ທາງ ເພດ).

## ຄຳຖາມສຳລັບຜູ້ທີ່ຄິດວ່າອາດເປັນຜູ້ລອດຊີວິດ ຈາກການຖືກຫລອກລວງ

- ເຈົ້າມາອາເມຣິກາເພື່ອເຮັດວຽກອັນນຶ່ງ ຫລື ຈຸດປະສົງ ອັນນຶ່ງ ແຕ່ບັດມາຮອດຜັດຮູ້ວ່າວຽກນັ້ນ*ບໍ່ເປັນຄື*ດັ່ງໄດ້ ສັນຍາໄວ້ແມ່ນບໍ່?
- ເຈົ້າຖືກບັງຄັບໃຫ້ເຮັດວຽກ- ຍົກຕົວຢ່າງເຊັ່ນ:
  - ເປັນຄົນໃຊ້ຢູ່ໃນເຮືອນຜູ້ໃດຜູ້ນຶ່ງແມ່ນບໍ່?
  - ເປັນຄົນຜະຫລິດສິນຄ້າໃນໂຮງງານ, ໃນຟາມ ຫລື ຮ້ານອາຫານແມ່ນບໍ່?
  - ເປັນຄົນໃຫ້ບໍຣິການທາງເພດແມ່ນບໍ່?
  - ເຮັດວຽກເຮືອນໃຫ້ຜົວຫລືເມັຽຂອງເຈົ້າແມ່ນບໍ່?
- ເຈົ້າເຮັດວຽກໂດຍທີ່ບໍ່ໄດ້*ເງິນຕອບແທນ*ແມ່ນບໍ່?
- ເຈົ້າໄດ້ຖືກບອກວ່າ ເຈົ້າຕ້ອງເຮັດວຽກ*ເພື່ອໃຊ້ໜີ້*ແມ່ນ ບໍ່?
- ໃນຍາມເຈົ້າຈະອອກນອກເຮືອນ, ກິນ, ນອນ, ຫລື ເຂົ້າຫ້ອງນ້ຳເຈົ້າຕ້ອງໄດ້ຂໍອານຸຍາດກ່ອນຫລື ບໍ່?
- ມີໃຜກັກເອົາປັສປໍ ແລະ ບັດປະຈຳຕົວອື່ນໆ ຂອງເຈົ້າ ໄວ້ບໍ່?
- ເຈົ້າຫລື ຄອບຄົວຂອງເຈົ້າ *ຖືກບັງຄັບ ຫລື ນາບຂູ່ບໍ່?*

## ຄຳອະທິບາຍ ການຫລອກລວງຄ້າຂາຍມະນຸດ

- **ການຫລອກລວງຄ້າຂາຍມະນຸດແຕກຕ່າງກັບການລັກລອບ ເຂົ້າເມືອງ.** ການລັກລອບເຂົ້າເມືອງແມ່ນຄວາມສະມັກໃຈ ຂ້າມຊາຍແດນສາກົນໂດຍບໍ່ໄດ້ຖືກກວດຄົ້ນ. ຄົນເຂົ້າເມືອງທີ່ລັກລອບເຂົ້າມາສະຫະລັດອາເມຣິກາໄດ້ຝ່າ ຝືນກົດໝາຍແຕ່ຜູ້ທີ່ຖືກຫລອກລວງມາຂາຍຊ້ຳພັດ *ໄດ້ຮັບ ການປົກປ້ອງຈາກກົດໝາຍ.*

- **ການຫລອກລວງຄ້າຂາຍມະນຸດມີລັກສະນະຄ້າຍຄືການກະ ທຳທາລຸນຢູ່ພາຍໃນເຮືອນ.** ຜູ້ລັກລອບຄ້າຂາຍມະນຸດຄວບ ຄຸມຜູ້ຕົກເປັນເຫຍື່ອຂອງການຄ້າຂາຍນີ້ໂດຍການໃຊ້ການ ຂົ່ມເຫັງທາງດ້ານຮ່າງກາຍ ຫລື ດ້ານຈິດໃຈ. ຜູ້ທີ່ລອດຊ ີ ວິດຈາກການຖືກຫລອກລວງສ່ວນຫລາຍມັກຖືກກັກໃຫ້ຢູ່ ຢ່າງໂດດດ່ຽວທີ່ສຸດ, ບໍ່ມີເອກະສານບັນທຶກທີ່ຢູ່ອາສັຍ, ພົບ ບັນຫາດ້ານພາສາ. ບໍ່ມີແຫລ່ງຊັບໃດໆ, ຮູ້ສຶກບໍ່ມີທາງທີ່ຈະ ຕໍ່ສູ້ ແລະ ຢ້ານກົວ, ບໍ່ກ້າປາກກ້າເວົ້າຫຍັງ.

- **ການຫລອກລວງຄ້າຂາຍມະນຸດມີລັກສະນະທີ່ເໜືອກວ່າ ການຄ້າຂາຍຄົນໃຫ້ເປັນໂສເພນີ ຫລື ເຮັດວຽກກ່ຽວກັບ ການຮ່ວມເພດອື່ນໆ.** ຜູ້ທີ່ລອດຊີວິດຈາກການຖືກຫລອກ ລວງມາຂາຍຈະເຮັດວຽກໃນໂຮງງານ, ໃນຟາມ, ຮ້ານອາ ຫານ, ບ່ອນກໍ່ສ້າງ, ຫລື ເຮືອນສ່ວນຕົວໃນນາມທີ່ ເປັນຄົນ ງານທີ່ຢູ່ພາຍໃນ. ສ່ວນຄົນທີ່ຖືກຂາຍໃຫ້ໄປເຮັດບໍລິການ ທາງເພດນັ້ນຖືກບັງຄັບໃຫ້ເຮັດສິ່ງທີ່ຜິດກົດໝາຍ ຫລື ແຕ່ງ ງານ.

- **ຜູ້ທີ່ລອດຊີວິດຈາກການຖືກຫລອກລວງອາດຈະແມ່ນຄົນ ສັນຊາດອາເມຣິກາກໍເປັນໄດ້.** ຜູ້ທີ່ລອດຊີວິດຈາກການຖືກ ຫລອກລວງລວມມີ ສັນຊາດ, ພົລເມືອງ, ຜູ້ທີ່ໄດ້ຮັບຖານະ ເປັນຄົນອາໃສຢູ່ໃນສະຫະລັດອາເມຣິກາແບບຖາວອນພ້ອມ ທັງຄົນເຂົ້າເມືອງທີ່ບໍ່ມີເອກະສານ.

- **ການຫລອກລວງຄ້າຂາຍມະນຸດກ່ຽວພັນກັບ ຜູ້ຊາຍ, ຜູ້ຍິງ, ແລະ ເດັກນ້ອຍ.** ຜູ້ທີ່ລອດຊີວິດຈາກການຖືກຫລອກລວງມີ ທຸກຊະນິດ. ເຄິ່ງນຶ່ງຂອງຈຳນວນຄົນທີ່ຖືກຫລອກລວງ ແມ່ນເດັກນ້ອຍ ແລະ 80% ຂອງຜູ້ທີ່ລອດຊີວິດຈາກການຖືກ ຫລອກລວງແມ່ນແມ່ຍິງ.

## ການສັນນິຖານເບິ່ງຜູ້ທີ່ລອດຊີວິດຈາກ ການຖືກຫລອກລວງມາຂາຍ

ຄົນຜູ້ນຶ່ງອາດຈະເປັນຜູ້ຮັບເຄາະຮ້າຍຈາກການຖືກຫລອກ ລວງຖ້າຫາກນຶ່ງໃນບັນດາຂໍ້ລຸ່ມນີ້ຫາກເປັນຈິງ:

- ເປັນຜູ້ຮັບເຄາະຮ້າຍຈາກການລະເມີດກົດໝາຍແຮງງານ.
- ນາຍຈ້າງຫລື ຄູ່ຄອງຂອງລາວຂົ່ມຂູ່ລາວ ຫລື ຄອບ ຄົວຂອງລາວ.
- ລາວມີຄົນຕິດຕາມທີ່ຮູ້ສຶກວ່າຄວບຄຸມລາວຢູ່ທຸກເວລາ.
- ເບິ່ງຊື່ງລາວຄືວ່າບໍ່ມີບັດໃດໆ ທີ່ໃຊ້ເປັນບັດປະຈຳຕົວໄດ້.
- ລາວເຮັດວຽກໂດຍທີ່ບໍ່ໄດ້ຮັບເງິນ ຫລື ເຮັດເພື່ອເປັນການ ຈ່າຍໜີ້.
- ອຸດສະຫະກຳທີ່ມັກມີຜູ້ຖືກເຄາະຮ້າຍຈາກການຖືກຫລອກ ມາ ຂາຍລວມມີ ຄົນໃຊ້ພາຍໃນເຮືອນ, ໂຮງແຮມຫລືອາຊີບ ກ່ຽວຂ້ອງກັບການທ່ອງທ່ຽວ, ກຳມະກອນ ໃນໂຮງງານ, ບໍຣິການໃນຮ້ານອາຫານ, ວຽກກໍ່ສ້າງ, ວຽກກ່ຽວກັບເພດ ສຳພັນ, ວຽກກະສິກຳ ຫລື ການປະໂມງ.

## ແຫລ່ງສຳລັບຂໍການຊ່ວຍເຫລືອ

- ໂທຫາຕຳຫລວດ ໂດຍການໝູນເລກ 911.
- ໂທສາຍໂດຍກົງສຳລັບຍາມຂັບຂັນຂອງກອງທຶນ AALDEF ທີ່ເບີ 1.800.966.5946 ຫລື ອົງການກົດໝາຍອັນອື່ນ ເພື່ອຂໍການແນະນຳ ນຳສົ່ງ ຫລື ບໍຣິການ.
- ໂທສາຍຮ້ອງທຸກຂອງໜ່ວຍກຳລັງປ້ອງກັນການລັກລອບ, ຫລອກລວງເອົາຄົນເຂົ້າມາ ແລະ ກົດຂີ່ຂູດຮີດຄົນງານ ຂອງກະຊວງ ຍຸຕິທັມແຫ່ງສະຫະຣັດອາເມຣິກາທີ່ ເບີ 1.888.428.7581.
- ໂທສາຍໂດຍກົງສຳລັບຍາມຂັບຂັນຂອງ ພະແນກຂໍ້ມູນ ກ່ຽວກັບການລັກລອບ ແລະ ການແນະນຳນຳສົ່ງຂອງ ກະຊວງ ບໍຣິການດ້ານສຸຂພາບ ແລະ ມະນຸດສະທັມທີ່ເບີ 1.888.3737.888.